ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.COM

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເລກທີ 0610/ສວນ

ນະຄອນຫຼວງວຽງຈັນ, ວັນທີ 10 ເມສາ 2020

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ທີ່ໄດ້ມີການກຳນົດ ວັນ,ເວລາ ແລະ ສະຖານທີ່ ການຈັດກອງປະຊຸມໃໝ່

- **ອີງຕາມ** ໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ສະບັບເລກທີ 0506 ລົງວັນທີ 11 ມີນາ 2020
- **ອີງຕາມ** ແຈ້ງການເລື່ອນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ສະບັບເລກທີ 0594 ລົງວັນທີ 30 ມີນາ 2020.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (“**ບໍລິສັດ**”) ຂໍເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນຂອງບໍລິສັດ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໃນວັນທີ ວັນທີ 24 ເມສາ 2020 ເວລາ 14:00 ໂມງ (ເລີ່ມລົງທະບຽນ ເວລາ 13:00 ໂມງ) ຢູ່ທີ່ ຫ້ອງໄດມ້ອນ, ຊັ້ນ 4, ໂຮງແຮມແລນມາກ ແມ່ຂອງ ອີເວີໄຊ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຫລັງຈາກທີ່ມີແຈ້ງການເລື່ອນກອງປະຊຸມໃນຄັ້ງກ່ອນ ເຊິ່ງປະຈຸບັນ, ບໍລິສັດພວກເຮົາມີຄວາມພ້ອມແລ້ວທີ່ຈະຈັດກອງປະຊຸມ ແລະ ມີແຜນຮັບມືໃນການຈັດກອງປະຊຸມ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດ COVID-19 ເຊິ່ງມີລາຍລະອຽດດັ່ງນີ້:

1. ມີຈຸດຄັດກອງຄົນກ່ອນທີ່ຈະເຂົ້າຫ້ອງປະຊຸມຄື: ທຸກຄົນອຸ່ນນະພູມຕ້ອງບໍ່ກາຍ 37,5 ອົງສາ ແລະ ຕ້ອງໃສ່ໜ້າກາກອະນາໄມ ຈຶ່ງສາມາດເຂົ້າຫ້ອງປະຊຸມໄດ້.
2. ມີເຈວແອວກໍຣ໌ລ້າງມື ຢູ່ຈຸດຄັດກອງ, ຢູ່ຈຸດລົງທະບຽນ ແລະ ໃນຫ້ອງປະຊຸມ.
3. ການຈັດຕັ່ງນັ່ງສຳລັບ ປະທານກອງປະຊຸມ, ສະມາຊິກສະພາບໍລິຫານ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ, ຄະນະເລຂາ ແລະ ຜູ້ຖືຮຸ້ນທຸກຄົນ ຕ້ອງນັ່ງຫ່າງກັນ 1 ແມັດ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ຂໍສະແດງຄວາມນັບຖື

ຜູ້ອຳນວຍການໃຫຍ່

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

